ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ກະຊວງກະສິກໍາ ແລະ ປ່າໄມ້

ກົມແຜນການ ແລະ ການຮ່ວມມື

ເລກທີ : 0999/ກຜຮ

ວັນທີ: 11/APR/2022

## ຫນັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

## ໃນການຈັດຊື້ອຸປະກອນເຄື່ອງແລັບສໍາລັບກົມປູກຝັງ

## ກະຊວງກະສິກໍາ ແລະ ປ່າໄມ້

ເຖິງ: ບໍລິສັດ ສະໜອງອຸປະກອນເຄື່ອງແລັບ ໃນ ສປປ ລາວ.

1. ໂຄງການຜະລິດກະສິກໍາເປັນສິນຄ້າຢູ່ ສປປ ລາວ ໄດ້ຮັບອະນຸມັດງົບປະມານທຶນຈາກທະນາຄານໂລກ ເລກທີ P161473 ເພື່ອດໍາເນີນການປະມູນຈັດຊື້ອຸປະກອນເຄື່ອງກວດໄວ ແລະ ນໍ້າຢາເຄມີສໍາລັບຫ້ອງແລັບ (Rapid Test, Reagents and Chemical) ຂອງສູນປ້ອງກັນພືດ, ກົມປູກຝັງ ກະຊວງກະສິກໍາ ແລະ ປ່າໄມ້ ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການ ຜະລິດກະສິກໍາເປັນສິນຄ້າ ຢູ່ ສປປ ລາວ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສໍາລັບການຈັດຊື້ອຸປະກອນເຄື່ອງແລັບ ໄລຍະເວລາໃນການສົ່ງມອບແມ່ນ 90 ວັນຢ່າງຕໍ່າ.
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ ມີນາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ວັນທີ 27/APR/2022 ທີ່ ຫ້ອງການປະສານງານ ໂຄງການ ຜະລິດກະສິກໍາເປັນສິນຄ້າ ຢູ່ ສປປ ລາວ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 10:15 ໂມງ ວັນທີ 27/APR/2022 ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຮອງ ຫົວໜ້າກົມ

ປອ. ບຸນເດດ ສຸດທະວີໄລ

ຕິດຕໍ່ເບີໂທ:

ນາງ ວິໄລລັກ ໂພທິມາດ

020 22232553